

# ເອີ ຮັກກັນໄດ້

ອຸທິນ ບຸນຍາວົງ

# ເຮົາຮັກກັນບໍ່ໄດ້


| | |
|---|---|
| ວັນນະຄະດີຮ່ວມສະໄໝ | ໂດຍ ອຸທິນ ບຸນຍາວົງ |
| ບັນນາທິການ | ດາຣາ ກັນລະຍາ |
| | ດວງເດືອນ ບຸນຍາວົງ |
| ຮູບປະກອບ | ແພງ ຜາຟອງ |
| ທະບຽນ ອະນຸຍາດ | 10172/ຖວ.ກພ |
| ຈຳນວນ | 3000 ຫົວ |
| ພິມທີ່ | ຈຳປາການພິມ |



2002 © ສະຫງວນ ລິຂະສິດ ອຸດົມພອນ ບຸນຍາວົງ
ຕາມຫລັກການລິຂະສິດສາກົນ ແລະມາລະຍາດຕາມທຳນຽມ ຫ້າມນຳໃຊ້ ກ່າຍ ລອກລຽນ ທຸກບົດ ທຸກຂໍ້ຄວາມ ທີ່ຈັດພິມໃນປຶ້ມຫົວນີ້. ສຳລັບການນຳໃຊ້ ເພື່ອການສຶກສາ ຕ້ອງໄດ້ຮັບອະນຸຍາດເປັນລາຍລັກອັກສອນ ຈາກຜູ້ຖືລິຂະສິດ.



ອອກແບບ ຈັດພິມ ແລະຈຳໜ່າຍ

ດອກເກດ
Dokked

ດອກເກດ ຈັດພິມ
ອາຄານ ພາບົດສີທອງ ເລກທີ 006, ຊັ້ນ 1 ຫ້ອງ 1B / 02
ຖະໜົນຫລວງພະບາງ,ບ້ານສີທອງ,ເມືອງຈັນທະບູລີ,
ຕູ້ ປ.ນ. 230 ວຽງຈັນ, ສ.ປ.ປ.ລາວ
ໂທ (856 21) 24 1123, e-mail: dokked@veetoo.net

ວຽງຈັນ ສ.ປ.ປ.ລາວ

# ສາລະບັນ


ຄຳນຳຂອງຜູ້ຈັດພິມ ກ

ແປດເລື່ອງສັ້ນ ຂອງ ອຸທິນ ບຸນຍາວົງ: ຄ

*ຊຸດພົບສະທ້ອນ ຂອງສົງຄາມ*

ລືມແລ້ວ 2

ດອກໄມ້ທີ່ໄຮ້ຄ່າ 18

ສຽງສະອື້ນຈາກວຽງພູຄາ 28

ເຮົາຮັກກັນບໍ່ໄດ້ 36

ເດືອນດັບທີ່ວຽງຈັນ 59

ລາຄາຂອງຄວາມຕາຍ 67

ສຽງຈາກທົ່ງໄຫຫີນ 75

ປະກອບສ່ວນ 85

ຊີວະປະຫວັດໂດຍຫຍໍ້ 93

# ຄຳນຳຂອງຜູ້ຈັດພິມ

ໃນອຸທິຍານອັກສອນ ນັບແຕ່ຊຸມປາຍປີ 1960 ມາຮອດ 2000 ນັກອ່ານທັງຫລາຍ ຍັງຄົງຈື່ຈຳ ອຸທິນ ບຸນຍາວົງ ຫລື *ແລງ ພູຜາເງິນ* ເຈົ້າຂອງແນວການຂຽນທີ່ອ່ານງ່າຍ ແຕ່ກິນໃຈເລິກ. *ອຸທິນ* ມັກໃຊ້ປະໂຫຍກສັ້ນໆ ຊື່ຕົວລະຄອນແບບລາວໆ ແຕ່ແປກຕ່າງ ເນື້ອໃນກວມໄປທຸກຂົງເຂດຊີວິດ ຄົນ ສັດ ແລະຕົ້ນໄມ້ ທຸກເລື່ອງມີຄະຕິເຕືອນໃຈແອບແຝງ ແລະຊວນຄິດ. ບົດເລື່ອງຂອງ *ອຸທິນ* ໄດ້ຮັບການແປ ແລະເຜີຍແຜ່ໃນຕ່າງປະເທດ ຄື: ຊຸດ *ປາຄໍ່ໂລພາ* (13 ເລື່ອງ) ປີ 1987 , ຈັດພິມໂດຍ ມູນນິທິ ສະຖຽນ ໂກເສດ - ນາຄະປະທີບ ປະເທດໄທ, *ແພງແມ່* (12 ເລື່ອງ, ຊື່ເປັນພາສາໄທວ່າ "ເມື່ອແມ່ຈາກໄປ " 1992, ສຳນັກພິມແມ່ຄຳຜາງ, ປະເທດໄທ ແລະເປັນພາສາອັງກິດ ຊື່ Mother's Beloved (14 ເລື່ອງ) ໂດຍສຳນັກພິມ ມະຫາວິທະຍາໄລ ວໍຊິງຕັນ (University of Washington Press) ປີ 1998 ທີ່ສະຫະລັດອາເມລິກາ. ນອກນັ້ນບາງເລື່ອງ ກໍໄດ້ແປເປັນພາສາຫວຽດນາມອີກ. ນັກອ່ານຕ່າງປະເທດມີໂອກາດ ໄດ້ຮູ້ຈັກສັງຄົມລາວ ວັດທະນະທຳລາວ ຜ່ານເລື່ອງສັ້ນຮ່ວມສະໄໝ ຈາກປຶ້ມເລື່ອງ "ແພງແມ່" ຂອງ *ອຸທິນ* ນີ້ ພໍສົມຄວນ.

ບໍລິສັດ ດອກເກດ ພາກພູມໃຈ ທີ່ມີເງື່ອນໄຂ ໄດ້ຈັດພິມເລື່ອງສັ້ນທັງເກົ່າ ແລະໃໝ່ ຂອງ *ອຸທິນ ບຸນຍາວົງ.* ປຶ້ມທີ່ທ່ານຖືຢູ່ໃນມືນີ້ ຈະຊ່ອຍເຕືອນຄວາມຊົງຈຳຂອງທ່ານຜູ້ອ່ານ ໃຫ້ຫວນຄືນເຖິງວັນເວລາທີ່ຜ່ານກາຍມາແລ້ວ 3 - 4 ທົດສະວັດ ແຕ່ຫາກຍັງເປັນບົດຮຽນສອນໃຈ ແລະຕັກເຕືອນ ໃຫ້ເຮົາ - ທ່ານ ໄດ້ຄຶດຄຳນຶງເຖິງໜ້າທີ່ຂອງເຮົາ

ຕໍ່ຄອບຄົວ ສັງຄົມ ປະເທດຊາດ ເພື່ອນມະນຸດ ຕໍ່ສັດ ແລະສິ່ງແວດລ້ອມ. ເຊີນພົບກັບຄວາມງາມ ໃນພາສາ ແລະກາມບັນຍາຍ ທີ່ອາດຕ້ອງໃຈທ່ານ ຂອງ *ອຸທິນ ບຸນຍາວົງ.*

*ວຽງຈັນ 20 ກັນຍາ 2002*

*ດາຣາ ກັບລະຍາ*

ບັນນາທິການ

# ແປດເລື່ອງສັ້ນ ຂອງ ອຸທິນ ບຸນຍາວົງ
# ຊຸດ ຜົນສະທ້ອນຂອງສົງຄາມ

ພາວະສົງຄາມທີ່ຍືດເຍື້ອ ເຮັດໃຫ້ສັງຄົມ ກໍຄືແມ່ຍິງ ເດັກນ້ອຍ ແລະຊາວໜຸ່ມທົ່ວໄປ ໃນຕົວເມືອງ ແລະຊົນນະບົດ ປະສົບຊາຕາກຳ ແຕກ ຕ່າງກັນ ເລື່ອງຕ່າງໆທີ່ຂຽນໃນລະຍະຫ່າງກັນກວ່າ 20 ປີ ນີ້ ສະທ້ອນພາບຜູ້ຄົນຫລາກຫລາຍຊີວິດ ນ້ຳຕາ ແລະສຽງຫົວ ເປັນສິ່ງທີ່ຫລີກບໍ່ໄດ້.

ເຖິງຈະບໍ່ຂຽນກ່າວປະນາມສົງຄາມໂດຍກົງ ແຕ່ເລື່ອງສັ້ນຈຳນວນໜຶ່ງ ຂອງ ອຸທິນ ກໍເລົ່າເຖິງຜົນກະທົບຕໍ່ການດຳລົງຊີວິດ ຂອງແມ່ຍິງລາວ ຊົນຊັ້ນຜ້ານກາງ ແລະທຳມະດາໃນຂົງເຂດວຽງຈັນ ແລະຕ່າງແຂວງ. ຂະນະທີ່ການຕໍ່ສູ້ທາງດ້ານການເມືອງ ແລະກຳລັງອາວຸດພວມດຳເນີນໄປຢ່າງຂໍ້ຽວຂາດ ລະຫວ່າງກຳລັງຝ່າຍຂວາ ແລະຝ່າຍປະຕິວັດ ນັບແຕ່ປາຍຊຸມປີ1960 ເຖິງ1972, ອຸທິນ ຍັງຢູ່ໃນໄວໜຸ່ມ ແລະຫາ ກໍກ້າວເຂົ້າສູ່ສັງວຽນອັກສອນ. ເຂົາພະຍາຍາມເລົ່າເຖິງສິ່ງທີ່ເກີດຂຶ້ນ ພາຍໃຕ້ແຮງໜີບເຕັງ ແລະການຂົ່ມຂູ່ ຕາມແບບຜະເດັດການທະຫານ ດັ່ງທີ່ເກີດຂຶ້ນຢູ່ໃນຫລາຍໆປະເທດໃນໂລກ. ເລື່ອງທັງຫລາຍຊີ້ບອກວ່າ ສົງຄາມໄດ້ສ້າງຄວາມເດືອດຮ້ອນ ຄວາມທຸກໃຈ ຍ້ອນການພັດພາກ ການສູນເສຍຢ່າງໃດ ໃຫ້ແກ່ປະຊາຊົນລາວ ແມ່ຍິງຊາວຊົນນະບົດ ແລະເດັກນ້ອຍຕາດຳໆ.

ເລື່ອງສັ້ນ 4 ເລື່ອງ ຄື *"ລືມແລ້ວ, ດອກໄມ້ທີ່ໄຮ້ຄ່າ, ສຽງສະອື້ນຈາກວຽງພູຄາ, ແລະ ເຮົາຮັກກັນບໍ່ໄດ້"* ຈາກໂຮມເລື່ອງ ສັ້ນຊຸດ

ດຽວກັນ ລ້ວນແຕ່ ສະເຫນີ ສະພາບຜົນສະທ້ອນ ໂດຍທາງກົງ ແລະທາງອ້ອມ ຂອງສົງຄາມຕໍ່ແມ່ຍິງລາວ ເອື້ອຍນ້ອງ ທັງໃນຕົວເມືອງ ແລະຊົນນະບົດ ຜູ້ຕ້ອງຜະເຊີນກັບຄວາມກົດດັນທາງສັງຄົມ ບໍ່ວ່າ "*ຈັບແດງ*" (ລົມ ແລ້ງ) ຫລື "*ບຸນທາ*" (ສຽງສະອື້ນ ຈາກວຽງພູຄາ) ທີ່ຕ້ອງດີ້ນຣົນ ຫາລ້ຽງຕົນເອງ ແລະລູກ ຕ້ອງຝືນໃຈຮັບສະພາບການ ເປັນເມຍນ້ອຍ ເປັນເມຍລັບ ຂອງນາຍທະຫານ ຫລື "*ພອນ*" ສາວນ້ອຍລູກກໍ່າພ້າ ທີ່ຕົກເປັນໂສເພນີ ທັງໆທີ່ບໍ່ປາຖະຫນາ (*ເຮົາຮັກກັນບໍ່ໄດ້*) ແລະຕ້ອງຕົກເປັນເຫຍື່ອແຫ່ງໂລກີ ທັງໆທີ່ພະຍາຍາມທີ່ສຸດແລ້ວ. ຊີວິດຂອງສາວນ້ອຍຄົນນີ້ ເປັນຕົວແທນຂອງແມ່ຍິງສາວຊາວນະບົດ ແລະໃນເມືອງທີ່ພາດທ່າເສຍທີດ້ວຍຄວາມອ່ອນຕໍ່ໂລກ. ເລື່ອງສັ້ນ ເລື່ອງນີ້ ຄ້າຍກັບໄດ້ຕັ້ງຄຳຖາມວ່າ ເຮົາຈະໃຫ້ໂອກາດພວກເຂົາແນວໃດ ?

ເມື່ອມີສົງຄາມ ຜູ້ຊາຍທີ່ອອກຈາກບ້ານ ບໍ່ວ່າໄປແນວຫນ້າ ຫລືໄປປະຕິບັດພາລະກິດອື່ນ ຢູ່ຫ່າງໄກຄອບຄົວ ປ່ອຍໃຫ້ແມ່ຍິງເປັນຝ່າຍແບກຫາບຄວາມທຸກລະທົມ ທັງຮ່າງກາຍ ແລະຈິດໃຈ. "*ຈັບແດງ*" ຢູ່ແກ່ນທ້າວ ກັບພໍ່ແມ່ ເອົາຜົວບໍ່ທັນຮອດປີ ຜົວທີ່ເປັນທະຫານ ກໍຈາກໄປແນວຫນ້າ ເມື່ອລູກຄົນທຳອິດ ຍັງຢູ່ໃນທ້ອງ ເວລາຜ່ານໄປສອງປີກວ່າ ຜົວກໍຍັງບໍ່ກັບມາ ແຕ່ລະມື້ແຕ່ລະວັນ ນາງຕ້ອງລໍຄອຍຢູ່ດ້ວຍຄວາມຫວັງວ່າ ມື້ນຶ່ງຜົວຈະກັບມາ ແຕ່: " *ອ້າຍຄົນໃຈບາບ ປ່ອຍໃຫ້ນ້ອງຄອຍລົມໆແລ້ງໆ ແລ້ວອ້າຍກໍທຳລາຍຄວາມຫວັງ ຂອງນ້ອງສິມຸດວ່າ ນ້ອງເອົາຜົວໃຫມ່ ຕອນອ້າຍຈາກໄປ ອ້າຍຈະຄຶດແນວໃດ.... ເຮົາຮັກກັນ ແຕ່ງດອງກັນ ແລ້ວອ້າຍກໍຈາກໄປ ຕອນນັ້ນນ້ອງຖືພາທ້ອງໃຫຍ່ ນ້ອງ ທຸກໃຈທີ່ສຸດ ທີ່ຂາດອ້າຍ ຜູ້ເປັນ ທີ່ເພິ່ງຍາມຄັບຂັນ ແຕ່ກໍພະຍາຍາມ ເຮັດໃຈດີງໄວ້...*" ລົມແລ້ງ ກະແສສຸດທ້າຍພັດມາ ເຮັດໃຫ້ອາກາດຍາມໃກ້ຄ່ຳ ເຢັນສະບາຍ ການຄອຍຖ້າສຳລັບມື້ນີ້ ໄດ້ສິ້ນສຸດລົງດ້ວຍຄວາມວ່າງເປົ່າ ເຫມືອນດັ່ງທຸກມື້ທີ່ຜ່ານມາ.

ຊີວິດຂອງ ຈັນແດງ ກໍຄືກັບຊີວິດຂອງ ແມ່ຍິງລາວໃນຊົນນະບົດ ບໍ່ຮູ້ວ່າ ອີກຈັກຮ້ອຍຈັກພັນ ເຊິ່ງບາງຄົນອາດ ທົນທຸກທົນວຽກ ໜັກບໍ່ໄດ້ ຕ້ອງຫາທາງອອກ ແບບໃໝ່ ດັ່ງ "*ຊໍາວຽງ*" (ດອກໄມ້ ທີ່ໄຮ້ຄ່າ) ຫລື ຖືກບີບບັງຄັບ ໃຫ້ເປັນເມຍນ້ອຍ ດັ່ງ "*ບຸນທາ*". ແມ່ຍິງທັງສີ່ຄົນ ໃນເລື່ອງສັ້ນຍຸກ 60 ກວ່າ ຂອງອຸທິນ ຕົກເປັນເຫຍື່ອ ຂອງພາວະສົງຄາມຄົນລະແບບ ພາຍໃຕ້ເງື່ອນໄຂຕ່າງກັນ ມັນເປັນເລື່ອງທີ່ສາມາດເກີດຂຶ້ນໄດ້ ຫລືທີ່ເກີດຂຶ້ນແລ້ວ ແລະຈະຕ້ອງເກີດ ຖ້າມີສົງຄາມ.

"*ເຕືອນເຕັບທີ່ວຽງຈັນ*" ຂຽນຂຶ້ນພາຍຫລັງທີ່ຊາວວຽງຈັນ ຜ່ານສົງຄາມກາງເມືອງມາສົດໆຮ້ອນໆ ໃນຊຸມທ້າຍປີ 60 ເວລານັ້ນ ຜູ້ຄົນມີຄວາມລະແວງສົງໄສຕໍ່ກັນ ຜູ້ຮ້າຍຊາຍໂຈນ ບໍ່ເກງກົວກົດໝາຍ ບັນຍາກາດບໍ່ໜ້າໄວ້ເນື້ອເຊື່ອໃຈ ຄອບງໍາໄປທົ່ວ, ນໍ້າໃຈໄມຕີຂອງຜູ້ຄົນນັບມື້ຫາຍາກ, ອີກຄັ້ງໜຶ່ງ ທີ່ຜູ້ຂຽນ ຍົບຍົກເອົາສະພາບການນີ້ ຂຶ້ນມາເລົ່າ ໃຫ້ເປັນເລື່ອງຕະຫລົກເບົາອາລົມ ແຕ່ກໍອາດເປັນການບອກເຕືອນວ່າ ຢ່າໃຫ້ເກີດສະພາບໜັກໜ່ວງກວ່ານີ້ເລີຍ ເພາະຖ້າບໍ່ດັ່ງນັ້ນຄົນເຮົາຄົງບໍ່ມີໄມຕີໃຫ້ກັນອີກແລ້ວ.

"*ລາຄາຂອງຄວາມຕາຍ*" (ໄຜ່ໜາມ, ກໍລະກົດ, 1972) ຂຽນໃນລະຍະສຸດທ້າຍຂອງ ການຖິ້ມລະເບີດ ໃສ່ດິນແດນພາກເໜືອຂອງລາວໂດຍຍົນອາເມລິກາ ພາຍໃຕ້ສະພາບໜັກໜ່ວງແບບນີ້ ຄອບຄົວພັດພາກຈາກກັນ ພໍ່ບໍ່ເຫັນລູກ - ລູກບໍ່ຮູ້ໜ້າພໍ່. "ນາງທອງສີ" ກໍເປັນຄົນໜຶ່ງໃນຈໍານວນແມ່ຍິງລາວ ບໍ່ຮູ້ທໍ່ໃດຕໍ່ທໍ່ໃດຄົນ ເມື່ອອົດທົນກັບຄວາມທຸກຍາກບໍ່ໄຫວ ນາງຈຶ່ງຕັດສິນໃຈນໍາໄປຫາຜົວ ທີ່ເປັນທະຫານເຮັດວຽກ ຢູ່ເມືອງສຸ້ຍ ແຂວງຊຽງຂວາງ ທັງໆທີ່ມີສິດຂຶ້ນຍົນລ້າໆ ເພື່ອເດີນທາງໄປຫາຜົວ ແຕ່ນາງກັບລູກນ້ອຍສາມຄົນກໍບໍ່ໄດ້ຂຶ້ນຍົນ ເພາະບໍ່ສາມາດຜ່ານດ່ານ "ພາສີມິດ" ທີ່ທ່ານນາຍຮ້ອຍຕັ້ງຂຶ້ນ. ນາງ ທອງສີໄດ້ຮັບຄວາມເຫັນໃຈຈາກທ່ານນາຍຮ້ອຍ ພາຍຫລັງທີ່ໄດ້ພະຍາຍາມ

ສະເໜີເງິນຈຳນວນເລັກນ້ອຍ ແຕ່ຖືກປະຕິເສດ. ໃນທີ່ສຸດ ນາງກັບລູກກໍໄດ້ຂຶ້ນຍົນ. ເລື່ອງມັນໜ້າຈະສຸດແລ້ວ ເພາະນາງໄດ້ຂຶ້ນຍົນ ສົມຄວາມຕັ້ງໃຈ ແຕ່ນັກຂຽນພິກປື້ນສະຖານະການໃຫ້ຜູ້ອ່ານໄດ້ຫົວ ແບບໜ້ຳໃຈ ວາດໃດວາດໜຶ່ງ ເມື່ອຍົນທີ່ນາງທອງສີ ກັບລູກຄວນ ຈະໄດ້ນັ່ງໄປນັ້ນປະສົບອຸບັດເຫດຕົກ ຜູ້ໂດຍສານທັງໝົດເສຍຊີວິດ ໂຮມທັງຊື່ ນາງທອງສີ ກັບລູກສາມຄົນນຳ ຈຶ່ງເປັນອັນວ່າ ເງິນຈຳນວນໜ້ອຍດຽວ ທີ່ນາງພະຍາຍາມວ່າຈ້າງນາຍຮ້ອຍນັ້ນ ຊື້ຄວາມຕາຍບໍ່ໄດ້ !

ນັກຂຽນໃຊ້ສຳນວນສຽດສີການກິນສິນບົນ ຂອງນາຍທະຫານຂັ້ນນາຍຮ້ອຍ ພາຍໃຕ້ ລະບອບເກົ່າຢ່າງເປີດເຜີຍ ແລະກ້າຫານ ດັ່ງວ່າ: *"ເປັນທີ່ ຮູ້ຈັກກັນດີວ່າ ທ່ານນາຍຮ້ອຍ ຮັບສິນບົນຈາກຄົນໂດຍສານ ສັງເກດຈາກເພິ່ນເວົ້ານົວຫົວມ່ວນ ແລະຕ້ອນຮັບພວກພໍ່ຄ້າ ແມ່ຄ້າ ດ້ວຍອາລົມດີ. ທ່ານນາຍຮ້ອຍ ມາປະຈຳການຢູ່ບ່ອນນີ້ໄດ້ຫົກເດືອນ ເພິ່ນກໍມີລົດຈັກຄັນໃໝ່ ຂີ່ເຈີດຊ້າຍເຈີດຂວາ ສູບຢາລາຄາແພງ ເຂົ້າ ຮ້ານອາຫານ ສັ່ງແບບບໍ່ອັ້ນ ແລະເມົາເກືອບທຸກແລງ"*. ຄຳບັນຍາຍເຖິງຄົນກິນສິນບົນ ຂ້າງເທິງນີ້ ຍັງຄົງໃຫ້ພາບບຸກຄົນ ເຊິ່ງອາດມີຢູ່ໃນ ທຸກຍຸກທຸກສະໄໝ ຢ່າງແຈ່ມແຈ້ງສີຈິງ.

ໃຜໆກໍຄົງປະຕິເສດບໍ່ໄດ້ວ່າ ລະເບີດຕົກຄ້າງ ທີ່ບໍ່ທັນແຕກຢູ່ລາວແມ່ນພະຍາມັດຈຸລາດທີ່ຂົ່ມຂູ່ຊີວິດຜູ້ຄົນ ບໍ່ວ່ານ້ອຍຫລືໃຫຍ່ ຍິງຫລືຊາຍ. ມັນເປັນອຸປະສັກຕົວຮ້າຍກາດ ຕໍ່ການພັດທະນາບຸກເບີກທີ່ດິນເພື່ອການກະສິກຳ ຢູ່ໃນຫລາຍແຂວງພາກເໜືອ ແລະໃຕ້ ໂດຍສະເພາະ ແຂວງຊຽງຂວາງ. ລັດຖະບານແຫ່ງ ສ.ປ.ປ.ລາວ ໄດ້ຮັບການຊ່ອຍເຫລືອຈາກຫລາຍປະເທດ ເພື່ອທຳລາຍ ແລະກູ້ລະເບີດເຫລົ່ານັ້ນອອກ.

ເລື່ອງສັ້ນ "*ສຽງຈາກທົ່ງໄຫຫີນ*" ຂອງ ອຸທິນ ທີ່ຂຽນ ແລະພິມໄວ້ແຕ່ປີ 1978 (ສຽງເອີ້ນຂອງໃຜ, 1978) ເປັນສຽງຮຽກເອີ້ນໂດຍ

ກົງ ໃຫ້ທຸກຄົນຫັນມາພິຈາລະນາເຖິງຜົນເສຽຫາຍຈາກສົງຄາມ ແລະ ມັນບໍ່ພຽງແຕ່ຮຽກຮ້ອງຫາຄວາມຮັບຜິດຊອບ ຂອງຄົນໃນປະເທດລາວເທົ່ານັ້ນ. ເມື່ອເລື່ອງນີ້ພິມອອກໃນປີ 1978 ເຈົ້າຫນ້າທີ່ ຂອງ *ອົງ ການມິດຕະພາບລາວ ແຄວກເກີ້* (Quaker'Service,Laos) ຂອງອາເມລິກາ ໄດ້ຕິດຕໍ່ມາຂໍພົບຜູ້ຂຽນ ໂດຍເຂົ້າໃຈວ່າ ເລື່ອງນີ້ຂຽນຈາກຄວາມຈິງ ເຊິ່ງຜູ້ຂຽນກໍໄດ້ບອກວ່າ ມີເຄົ້າມູນຄວາມເປັນຈິງ. ຈາກນັ້ນພະນັກງານທັງສອງ (ຄືນາງ *ຊາເກີລີນ ຊາຍົງ ກັບ ທ່ານ ໂຣເຊີ ຣັມຟ໌)* (Jacqueline Chagnon and Roger Rumph) ຂອງອົງການນີ້ ຈຶ່ງນໍາເອົາເລື່ອງນີ້ໄປເຜີຍແຜ່ ແລະໃນທີ່ສຸດໄດ້ຊ່ອຍໃຫ້ມີການແປອອກເປັນພາສາອັງກິດ ແລ້ວຈັດພິມອອກຮ່ວມກັບເລື່ອງອື່ນໆໃນປຶ້ມຊື່ "ແພງແມ່" ຫລື Mother's Beloved ຈັດພິມໂດຍສໍານັກພິມ ມະຫາວິທະຍາໄລ ວໍຊິງຕັນ (University of Washington Press) ສະຫະລັດອາເມລິກາ 1999. ຍ້ອນວ່າເນື້ອເລື່ອງກ່ຽວຂ້ອງ ກັບອາເມລິກາ ຜູ້ມີສ່ວນກໍ່ສົງຄາມຢູ່ລາວໂດຍກົງ ຜູ້ອ່ານບາງຄົນ ອາດຈະຮູ້ສຶກຄືກັບວ່າ ພວມອ່ານບົດສາລະຄະດີຢູ່. ຕົວລະຄອນເອກທີ່ຊື່ "*ໄມແກງ*" ບໍ່ຈະແຈ້ງ ໂດດເດັ່ນ ບໍ່ມີການພັນລະນາລະອຽດວ່າອາຍຸ ເທົ່າໃດ ຫນ້າຕາເປັນຢ່າງໃດ ແຕ່ຜູ້ອ່ານຈະຮັບຮູ້ເອງວ່າ ເຂົາຍັງຫນຸ່ມ ມີອະນາຄົດ ເປັນຜູ້ມີຄວາມຮັກບ້ານເກີດເມືອງນອນ ແລະຍັງຢາກມີຊີວິດຢູ່ຕໍ່ໄປ. ເວົ້າງ່າຍໆກໍຄື ໃນເລື່ອງສັ້ນໆພຽງສາມຫນ້າເຈ້ຍນັ້ນ ອຸທິນ ປ່ອຍໃຫ້ຜູ້ອ່ານດໍາເນີນເລື່ອງຕໍ່ເອງໄດ້. ຂຸມລະເບີດຈໍານວນມະຫາສານ ລະເບີດຕົກຄ້າງ ຊາກລົດຖັງຊາກປືນໃຫຍ່ ທີ່ຍັງຢາຍກະຈາຍຢູ່ເທິງຜືນແຜ່ນດິນຊຽງຂວາງ ເປັນຄືຄວາມຕາຍຕິດຕາມດັ່ງເງົາ ເປັນບາດແຜ ເລິກນັ້ນ ອາດຖືກວັນເວລາ ສາຍລົມ ແສງແດດນໍ້າຝົນເຊີລ້າງ ທັບຖົມຮ່ອງຮອຍໄປໃນມື້ໃດມື້ຫນຶ່ງ ແລ້ວຄວາມເຈັບປວດເຫລົ່ານັ້ນກໍຄ່ອຍໆ ຈາງຈືດ ແລະຫລົງລືມໄປ. ຜູ້ຄົນເກີດໃຫມ່ໃຫຍ່

ລຸນ ບໍ່ອາດສຳນຶກເຫັນສິ່ງເຫລົ່ານັ້ນອີກແລ້ວ ແຕ່ສິ່ງທີ່ບັນທຶກຢູ່ໃນ "ສຽງຈາກທົ່ງໄຫຫີນ" ລົງເປັນ ພະຍານຄວາມເຈັບປວດ ແຫ່ງອະດີດຕະການ ໃນຈຸດນີ້ ນັບວ່ານັກຂຽນໄດ້ໃຊ້ຄອງປາກກາຂອງເຂົາ ຮັບໃຊ້ແຜ່ນດິນເກີດຢ່າງຫັນການ.

ຄວາມເສຍຫາຍຈາກສົງຄາມ ເປັນສິ່ງທີ່ຫລີກເວັ້ນບໍ່ໄດ້ ແຕ່ກໍແມ່ນສົງຄາມນັ້ນເອງ ທີ່ສ້າງວິລະກຳ ຫລື ວິລະຊົນ . *"ປະກອບສ່ວນ"* (ແຮງໃຈ, 1990) ກໍເປັນອີກເລື່ອງຫນຶ່ງ ທີ່ພົວພັນກັບສົງຄາມ ແຕ່ຜູ້ຂຽນບໍ່ໄດ້ປະນາມສົງຄາມນັ້ນ ກົງກັນຂ້າມ ມັນຄ້າຍໆກັບປຸກກະແສຊາດນິຍົມຫລືນ້ຳໃຈຮັກຊາດໃຫ້ຕື່ນຂຶ້ນໃນຫົວໃຈ ຂອງຄົນທຸກຊົນຊັ້ນ ແມ່ນແຕ່ *"ຊ່າງແປງເກີບ"* ຜູ້ຫາເຊົ້າກິນຄ່ຳກໍຍັງຢາກມີສ່ວນປະກອບ ຢູ່ໃນພາລະກິດປ້ອງກັນຊາດ ເມື່ອເຖິງຄາວຈຳເປັນ. ຜູ້ຂຽນສັນຫາເລື່ອງມາສ້າງກຳລັງໃຈໃຫ້ແກ່ທຸກຊັ້ນຄົນໃນຊາດ ບໍ່ວ່າເຂົາຈະຮັ່ງມີ ຫລືຍາກຈົນ ເຂົາກໍສາມາດປະກອບສ່ວນໄດ້, ພຽງແຕ່ວ່າ ສິ່ງທີ່ເຂົາໄດ້ເຮັດໄປນັ້ນ ມັນອອກມາຈາກຄວາມຈິງໃຈ ຫລືບໍ່. ອີກຄັ້ງຫນຶ່ງ ນັກຂຽນ ພະຍາຍາມບອກວ່າ ເມື່ອໃດເຮົາຮູ້ສຶກວ່າໄດ້ເຮັດຕາມຫນ້າທີ່ ແລະດ້ວຍຈິດສຳນຶກອັນດີແລ້ວ ເຮົາຍ່ອມມີຄວາມສະບາຍໃຈ ດັ່ງ ຊ່າງແປງເກີບຜູ້ທຸກຍາກຮູ້ສຶກໂລ່ງໃຈ ທີ່ບໍ່ໄດ້ເກັບເງິນຄ່າແປງເກີບນຳບ່າວທະຫານຂາກຸດ.

ໂດຍສະຫລຸບແລ້ວ ເລື່ອງສັ້ນຂອງ *ອຸທິນ* ຊຸດນີ້ ໃຫ້ທັງຄວາມບັນເທີງ ດ້ານພາສາສຳນວນ ໂຄງເລື່ອງທີ່ຫລາກຫລາຍແຝງຄະຕິເຕືອນໃຈ ແລະຫລັກມະນຸດສະທຳ ໂດຍວິທີນຳສະເຫນີແບບງ່າຍດາຍ ເລົ່າເຖິງເຫດການ ຜົນສະທ້ອນຂອງສົງຄາມຕໍ່ຊີວິດຜູ້ຄົນ ໂດຍສະເພາະແມ່ຍິງບໍ່ວ່າໃນຕົວເມືອງ ຫລືຊົນນະບົດ

ອາດຈະມີບາງຄົນ ໃຫ້ຂໍ້ສັງເກດວ່າ ໃນເລື່ອງຊຸມປາຍປີ 60 ນັ້ນຄຳສັບສຳນວນທີ່ໃຊ້ ໃກ້ຫລືຄືກັບຄຳໃນພາສາໄທ ນັ້ນກໍເປັນສິ່ງທີ່ຕັດສິນຍາກ ເພາະຄຳລາວ ກັບຄຳໄທນັ້ນ ໃກ້ກັນຫລາຍ ແລະບາງຄຳ ກໍ

ແມ່ນອັນດຽວກັນອ້ອຍຕ້ອຍ ເພາະທັງຄຳລາວ ແລະຄຳໄທ ຈຳນວນຫລວງຫລາຍ ໄດ້ດັດແປງມາຈາກຄຳປາລີ ສັນສະກິດ ແລະຄຳຂະເໝນ ຄືກັນ ເວັ້ນແຕ່ວ່າ ໃຜຈະໃຊ້ຫລາຍ ຫລື ນິຍົມຮູບແບບໃດເທົ່ານັ້ນ. ເວົ້າຕາມຫລັກການແລ້ວ ການຂຽນການແຕ່ງວັນນະຄະດີ ບໍ່ສາມາດຈຳກັດການໃຊ້ພາສາຢ່າງຕາຍຕົວໄດ້ ຄວາມເຂົ້າໃຈ ຄວາມພໍໃຈ ນິຍົມ ຊົມຊອບຂອງຜູ້ອ່ານ ໃນສຳນວນໂວຫານຂອງຜູ້ຂຽນ ແລະກາລະເວລາ ເທົ່ານັ້ນ ເປັນສິ່ງຕັດສິນ ເພາະການປະພັນ ຫລື ນັກຂຽນແມ່ນຜູ້ນຳໃຊ້ ແລະໃຫ້ກຳເນີດແກ່ ຄຳສັບສຳນວນໃໝ່ໆ ດັ່ງນັ້ນ ຍິ່ງມີການຂຽນ ການປະດິດແຕ່ງ ມີນັກປະພັນຫລາຍເທົ່າໃດ ການໃຊ້ຄຳເວົ້າສຳນວນ ໃນພາສານັ້ນໆ ກໍຍິ່ງຫລາກຫລາຍ ຈະເລີນຂຶ້ນເທົ່ານັ້ນ ທັງນີ້ ຍ້ອນວ່າ ຂອບເຂດການໃຊ້ ການສ້າງຄຳຂະຫຍາຍກວ້າງອອກຕາມຫົວຄິດປະດິດແຕ່ງຂອງບັນດານັກປະພັນນັ້ນເອງ.

ພວກເຮົາຫວັງຢ່າງຍິ່ງວ່າ ເລື່ອງສັ້ນຊຸດນີ້ ຈະມີສ່ວນໃນການປົກປັກຮັກສາພາສາສຳນວນ ຄຳເວົ້າລາວ ແລະມີສ່ວນໃນການສ້າງສວນອັກສອນລາວ ໃຫ້ມີສີສັນຫລາກຫລາຍ ແລະມີກິ່ນຫອມກ້ອໄປຊົ່ວກາລະນານ.

*ວຽງຈັນ ວັນທີ 8 ສິງຫາ 2002*

ດວງເດືອນ ບຸນຍາວົງ

# ເຮົາຮັກກັນບໍ່ໄດ້



ໂດຍ ອຸທິນ ບຸນຍາວົງ

ດອກເກດ
DokkeD

ແລ້ວນາງກໍນອນລົງຢູ່ຂ້າງອູ່ ເອົາມືໄກວໄປມາຊ້າໆ ແລະເຊືອບຫລັບໄປ.

*ຈັນແດງ*

ເປັນແມ່ຂອງເດັກນ້ອຍຜູ້ນີ້ ບິດາຖືກເກນ ເປັນທະຫານ ແລະກໍາລັງປະຕິບັດງານຢູ່ແນວໜ້າ ບິດາໄດ້ຈາກ ໄປຕັ້ງແຕ່ເດັກຍັງຢູ່ໃນທ້ອງ ນັບເວລາ ກໍໄດ້ສອງປີກວ່າແລ້ວ ແຕ່ເກີດມາເດັກ ບໍ່ເຄີຍເຫັນໜ້າພໍ່ເລີຍ ແລະບໍ່ຄຶດວ່າຈະມີສະມາຊິກໃນຄອບຄົວ ຕື່ມອີກນອກຈາກແມ່ ແມ່ຕູ້ ພໍ່ຕູ້ ຊຶ່ງເດັກເອີ້ນວ່າ ພໍ່ ແລ້ວກໍປ້າແສນບ້າແພວ ແມວສີດໍາ ແລະໝາບັກກ່ານຫລັງບາດ.

ຈັນແດງ ຫາລ້ຽງລູກດ້ວຍການຂາຍຜັກຂາຍເຂົ້າລອດຊ່ອງ ແລະສິ່ງຂອງເລັກໆນ້ອຍໆ ເທົ່າທີ່ພໍຈະຫາມາຂາຍໄດ້ ພໍເຖິງຍາມຝົນ ກໍເຮັດໄຮ່ໃສ່ນາຕາມໜ້າທີ່ຊາວຊົນນະບົດທົ່ວໄປ ຊຶ່ງຈະຫລີກເວັ້ນບໍ່ໄດ້ ໃນເມືອງນ້ອຍໆເຊັ່ນ ແກ່ນທ້າວນີ້.

ນາງລ້ຽງລູກຖ້າຜົວ ຊຶ່ງໄດ້ໃຫ້ສັນຍາວ່າ ຈະຕ້ອງກັບມາ ຫລັງຈາກໄປປະຕິບັດພາລະກິດຕາມໜ້າທີ່ຂອງລູກຜູ້ຊາຍສິ້ນສຸດລົງ.



ບາງແລະເຂົາຮັກກັນປານຈະກືນ ບາງຄອຍເຂົາ ດ້ວຍຫົວໃຈບໍລິສຸດ ແລະຄິດວ່າ ຕະຫລອດຊີວິດນີ້ ຈະມີພຽງເຂົາຄົນດຽວ ເປັນຄູ່ຮ່ວມຊີວິດ ຈະບໍ່ຂ້ອງກ່ຽວກັບຊາຍອື່ນໃດ ຕະຫລອດເວລາທີ່ເຂົາຈາກໄປ ຈິດໃຈຂອງບາງ ມີແຕ່ພາວະນາໃຫ້ເຂົາປອດໄພ ປາສະຈາກພະຍາດໂຣຄາທັງປວງ ທຸກແລງກ່ອນນອນ ບາງໄຫວ້ພະອະທິຖານ ຂໍໃຫ້ຄຸນພະພຸດ ພະທັມ ປົກປ້ອງຮັກສາເຂົາ ຂໍໃຫ້ເຂົາໄດ້ກັບມາຮ່ວມຊີວິດນຳກັນຕໍ່ໄປອີກ.

ບາງຈຳຄຳເວົ້າ ສຽງຫົວ ສຽງໄອ ຈຳອ້ອມກອດອາຍອຸ່ນ ແລະທຸກຢ່າງໃນຕົວເຂົາ ສຳລັບບາງ ເຂົາຈາກໄປແຕ່ຮາງກາຍທໍ່ນັ້ນ.

ບາງຄິດເຫັນວັນທີ່ເຂົາເດີນທາງອອກໄປ ຈຳໄດ້ວ່າເຂົາຈັບເອົາພົກຜ້າ ແລ້ວມັດໃສ່ແອວ ບາງຍື່ນທໍ່ເຂົ້າໃຫ້ເຂົາຮັບເອົາແລ້ວ ເດ່ມືມາຕົບບ່າ ຂອງບາງຄ່ອຍໆ.

" ແດງ... ອ້າຍລາລະ ຢ່າເປັນຫ່ວງອ້າຍເລີຍ ຂໍໃຫ້ເຮັດໃຈດີໆໄວ້ ອ້າຍຈາກໄປດ້ວຍຄວາມຈຳເປັນ ຖ້າບຸນເຮົາເຄີຍໄດ້ຮ່ວມກັນແຕ່ປາງກ່ອນ ຖ້າອ້າຍຍັງບໍ່ຕາຍ ເຮົາກໍຈະໄດ້ຢູ່ຮ່ວມກັນອີກ ຄິດວ່າອ້າຍ

ຈະຕ້ອງໄດ້ກັບມາຫານ້ອງແນ່ນອນ "

ແລ້ວເຂົາກໍລົງເຮືອນໄປ ນາງສະອື້ນໄຫ້ ແນມຕາມຫລັງເຂົາໄປສຸດສາຍຕາ ຕອນນັ້ນ ນາງຖືພາໄດ້ຫ້າເດືອນເຕັມ.

ເຂົາເຂົ້າຮັບການອົບຮົມຢູ່ໄຊຍະບຸລີ ແລະໄດ້ສົ່ງຂ່າວມາໃຫ້ເມຍຊາບ ຫລັງຈາກອອກຈາກບ້ານໄປ ໄດ້ເດືອນປາຍ ນາງຕື່ນເຕັ້ນດີໃຈທີ່ຮູ້ຂ່າວວ່າ ເຂົາສະບາຍດີ ນາງໄດ້ສົ່ງແຈ່ວບອງ ຫມາກຂາມຫວານ ແລະຜ້າແພອີໂປ້ໄປໃຫ້ ຫລັງຈາກນັ້ນ ເປັນເວລາຫ້າເດືອນ ເຂົາກໍງຽບໄປ ແລະມາຮູ້ຂ່າວ ອີກເທື່ອນຶ່ງວ່າ ກຳລັງຢູ່ນ້ຳບາກ ນາງຮູ້ວ່າການຕິດຕໍ່ສົ່ງຂ່າວນັ້ນລຳບາກສຳລັບແກ່ນທ້າວ ເມືອງນ້ອຍໆເຊັ່ນນີ້ ການສົ່ງຈົດຫມາຍຈຶ່ງຫລ້າຊ້າ ແລະສ່ວນຫລາຍຝາກມານຳຄົນເດີນທາງທີ່ຮູ້ຈັກກັນທໍ່ນັ້ນ.

ຈົດຫມາຍຈາກນ້ຳບາກ ເປັນສະບັບສຸດທ້າຍ ຫລັງຈາກນັ້ນ ຂ່າວຄາວຂອງເຂົາໄດ້ຫາຍໄປ ຈົນເຖິງດຽວນີ້ ກໍເປັນເວລາສອງປີ ນາງຄິດວ່າ ເຂົາອາດຕາຍເສຍແລ້ວກໍໄດ້ ເມື່ອຄິດເຊັ່ນນັ້ນ ນາງກໍນັ່ງຮ້ອງໄຫ້ດ້ວຍຄວາມອາໄລ ນາງກອດລູກໄວ້ດ້ວຍ



ຄວາມເວທະນາສົງສານ ທີ່ພໍ່ແລະລູກຕ້ອງມາ ພັດພາກຈາກກັນ ບໍ່ມີໂອກາດເຫັນຫນ້າກັນຈັກເທື່ອ ຄ່ຳມາບາງກ່ອມລູກສຽງຮ່ຳໄຮ ຫລຽວເບິ່ງ ດາວຢູ່ເທິງຟາກຟ້າ ແລ້ວກໍຄຶດນ້ອຍໃຈ ທີ່ຕ້ອງພົບກັບ ຄວາມໂສກເສົ້າ ຄວາມອາພັບອັບຈົນ ການພັດພາກຈາກກັນ ທີ່ບໍ່ມີວັນສິ້ນສຸດ ຍ້ອນຄວາມດຳມືດ ຂອງເສັ້ນທາງຊີວິດດັ່ງກ່າວ ນ້ຳຕາຂອງ ນາງໄຫລອາບ ແກ້ມເກືອບບໍ່ເວັ້ນແຕ່ລະວັນ.

ບາງຄັ້ງ ນາງກໍຄຶດວ່າ ເຂົາອາດຍັງບໍ່ຕາຍຫາກແຕ່ຫລົງທາງ ຫລືຖືກຈັບເປັນຊະເລີຍ ກໍໄດ້ ເມື່ອຄຶດເຊັ່ນນັ້ນນາງພໍອຸ່ນໃຈໄປໄດ້ຫນ້ອຍຫນຶ່ງ ແຕ່ຄວາມຫວັງເປັນພຽງແສງຮິບຮີ່ຮຸ່ງພົມຮຽວໆ ທ່າມກາງທະເລອັນກວ້າງໃຫຍ່ໄພສານ ຊຶ່ງຈະລັບຫາຍໄປໃນຂອບຟ້າ ໃນນາທີໃດນາທີຫນຶ່ງ ເຖິງຄວາມຫວັງມີຫນ້ອຍ ນາງກໍພາລູກຄອຍ ຄອຍດ້ວຍຄວາມເປັນຫ່ວງ ດ້ວຍຫົວໃຈຊື່ສັດ ຈາກວັນເປັນເດືອນ ຈາກເດືອນເປັນປີ ປີຫນຶ່ງຜ່ານໄປ ປີສອງເຂົ້າມາ ພ້ອມກັບຫອບເອົາຄວາມຫວ່າງເປົ່າມາໃຫ້ ລ່ວງເຖິງປີສາມຍັງເຊັ່ນເດີມ ຄົງມີແຕ່ລົມແລ້ງພັດມາວີ່ໆ ເຫມືອນຈະເຕືອນ

ໃຫ້ນາງຊາບວ່າເຂົາຈາກໄປແລ້ວ ໂດຍບໍ່ມີວັນກັບມາອີກ ຖ້າເປັນເຊັ່ນນັ້ນແທ້ ຊີວິດນາງກໍເຫມືອນໄດ້ຈົມລົງກົ້ນເຫວເລິກ ທີ່ເຕັມໄປດ້ວຍຄວາມທຸກລະທົມ ຄວາມອັບໂຊກ ຄວາມອາພັບກັບດານ ແລະຄວາມເສົ້າທຸກຢ່າງ ທີ່ມະນຸດຜູ້ມີເວນກຳ ຈະຕ້ອງຜະເຊີນຢ່າງຫລີກລ່ຽງບໍ່ໄດ້ ມັນຄືອະເວຈີຂອງຄົນເປັນໆ.

ແລະແລ້ວ ຕອນບ່າຍວັນຫນຶ່ງ ທ່າມກາງແສງແດດອັນຮ້ອນຂອງເດືອນເມສາ ຫລັງຈາກວັນອັນແສນນານທີ່ໄດ້ພັດພາກຈາກກັນ ເຂົາກໍກັບມາອີກ ເຂົາຄອນພົກ ມືຊ້າຍຈັບໄມ້ເທົ້າຍ່າງ ມາດ້ວຍຄວາມອິດເມື່ອຍ ໃສ່ຊຸດທະຫານເກົ່າໆ ຂາໂສ້ງກໍ້ຂຶ້ນໄປຢູ່ເຄິ່ງຫນ້າແຂ່ງ ເຫື່ອຍ້ອຍຕາມຫນ້າຜາກ ແລະຄໍ.

ຈັນແດງ ແລ່ນລົງຂັ້ນໄດດ້ວຍຄວາມດີໃຈ ແລະຮ້ອງຊື່ເຂົາຢ່າງແຮງໃຫ້ສົມໃຈ ເພາະວ່າ ບໍ່ໄດ້ເອີ້ນມາດົນແລ້ວ.

" ອ້າຍແຖມ ! ອ້າຍແຖມ ມາແລ້ວ ! "

" ແດງ ... ນ້ອງຮັກຂອງອ້າຍ "

ນາງໄປໂຈມເອົາພົກເຄື່ອງຂອງຈາກເຂົາແລ້ວ ກໍຊ້ວນໃສ່ແຂນ ຊູຂຶ້ນເທິງເຮືອນ.



" ຕ້າຍ ! ອ້າຍແຖມ ຈັ່ງແມ່ນຂ້ອຍຄຶດຮອດເຈົ້າ " ນາງກ່າວຂະນະຂຶ້ນຂັ້ນໄດ.

ເຂົາເວົ້າຫຍັງເກືອບບໍ່ອອກ ເພາະເມື່ອຍຫລາຍ ທີ່ເດີນທາງໄກ ນາງຈັດແຈງເອົານ້ຳມາໃຫ້ກ່ອນ ແລ້ວກໍຊ່ອຍແກ້ເສື້ອ ຊ່ອຍພັດວີໃຫ້ຫາຍຮ້ອນ ຢ່າງຖະນຸຖະໜອມ.

" ນີ້ວະລູກ ໂທ່ ! ໂທ່ ໃຫຍ່ແລ້ວບໍ ! " ເຂົາເວົ້າແລ້ວຍິ້ມກັບນາງ.

" ແມ່ນລະອ້າຍ ລູກຊາຍກຳລັງນອນຫລັບ ຄືພໍ່ທຸກຢ່າງເລີຍ "

" ລູກມັນຕ້ອງຄືພໍ່ ໃຫຍ່ແລ້ວເປັນທະຫານ "

" ບໍ່ຢາກໃຫ້ເປັນດອກ ຄຶດຮອດ ເປັນຫ່ວງ "

ນາງກ່າວແລ້ວ ກໍເຂົ້າເຮືອນຄົວ " ອ້າຍເຊົາເມື່ອຍຈັກໜ່ອຍ ນ້ອງຊິຫາພາເຂົ້າມາໃຫ້ກິນ "

ໃນຕອນແຮກ ການກັບມາຂອງເຂົາ ນຳຄວາມຕື່ນເຕັ້ນດີໃຈມາສູ່ຄອບຄົວ ເຫລືອຄະນານັບ ມັນເໝືອນວ່ານາງໄດ້ພົບກັບ ແສງສະຫວ່າງອັນເຈີດຈ້າ ຫລັງຈາກທີ່ຕ້ອງພົບພໍ້ກັບຄວາມດຳມືດ ຂອງຊີວິດມາແລ້ວນານວັນ ນາງເລີ່ມມີຊີວິດຊີວາຂຶ້ນມາ ກອດ

ລູກແລ້ວ ກໍຫົວຫລິ້ນກັບຜົວຢ່າງມ່ວນຊື່ນ ສ່ວນເຂົາກໍດີໃຈເປັນທໍາມະດາ ເມື່ອມາພົບລູກ ແລະເມຍ ຫລັງຈາກທີ່ພາກກັນໄປດົນ ແຕ່ໃນສ່ວນເລິກ ມັນເປັນຄວາມອຸກອັ່ງ ແລະຫຍຸ້ງຍາກສັບສົນ ທີ່ພະຍາຍາມບີບຫົວໃຈ ຂອງເຂົາໃຫ້ມຸ່ນທະລາຍ ເພາະຕົວເອງໄດ້ທໍລະຍົດເມຍຜູ້ຊື່ສັດ ແລະລູກຜູ້ໄຮ້ດຽງສາ ນັ້ນຄືເຂົາໄດ້ມີເມຍໃຫມ່ຢ່າງຫລີກບໍ່ໄດ້ ເພາະສິ່ງແວດລ້ອມ ແລະເຫດບັງຄັບ ເຂົາຄຶດບໍ່ອອກວ່າຈະເຮັດຢ່າງໃດດີ.

ແລະແລ້ວ ໂລກນີ້ໄດ້ດັບມືດລົງອີກຄັ້ງນຶ່ງ ເມື່ອເຂົາບອກຄວາມຈິງແກ່ນາງ.

" ໃນທີ່ສຸດ ອ້າຍກໍຂ້ານ້ອງທັງເປັນ !"

" ອ້າຍເຮັດໄປດັ່ງນັ້ນ ກໍເພາະຄວາມຈໍາເປັນເພາະຄວາມໃກ້ຊິດ ຕອນນັ້ນ ອ້າຍຖືກສົ່ງໄປອົບຮົມຕໍ່ທີ່ ຫລວງພະບາງ ອ້າຍບໍ່ມີພີ່ນ້ອງຜູ້ໃດ ເລີຍໄປຝາກກິນເຂົ້າເດືອນນໍາຄອບຄົວຫນຶ່ງ ເຈົ້າຂອງເຮືອນເພິ່ນບໍ່ມີລູກຊາຍ ເລີຍຝາກເອົາເປັນລູກ ຮັກ ອ້າຍຢູ່ນໍາເພິ່ນເກືອບຮອດປີ ເພິ່ນກໍບໍ່ເອົາເງິນນໍາ ຄັ້ງຫນຶ່ງ ອ້າຍລົ້ມປ່ວຍ ຕ້ອງນອນໂຮງໝໍ ແມ່ຮັກ ເປັນຜູ້ເຮັດຂອງກິນ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ